**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງຫຼວງນໍ້າທາ

ເຈົ້າແຂວງ

ເລກທີ 278 /ຈຂ

ຫຼວງນໍ້າທາ, ວັນທີ 23 ພຶດສະພາ 2023

# ຂໍ້ຕົກລົງ

## ວ່າດ້ວຍການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງຂອງແຂວງຫຼວງນໍ້າທາ

- **ອີງຕາມ** ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ, ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ໝວດທີ 4 ມາດຕາ 19 ແລະ ມາດຕາ 20 ວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ຂອງເຈົ້າແຂວງ ເຈົ້າຄອງນະຄອນ;
- **ອີງຕາມ** ກົດໝາຍ ວ່າດ້ວຍການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ສະບັບປັບປຸງ), ເລກທີ 16/ສພຊ, ລົງວັນທີ 7 ກໍລະກົດ 2022;
- **ອີງຕາມ** ມະຕິກອງປະຊຸມ ສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງຫຼວງນໍ້າທາ ຊຸດທີ II, ສະບັບເລກທີ 21/ສພຂ, ລົງວັນທີ 21 ມີນາ 2023;
- **ອີງຕາມ** ຫນັງສືສະເໜີ ຂອງພະແນກອຸດສາຫະກໍາ ແລະ ການຄ້າແຂວງ ສະບັບເລກທີ 347/ພກອ.ນທ, ລົງວັນທີ 7 ເມສາ 2022.

## ເຈົ້າແຂວງໆຫຼວງນໍ້າທາ ຕົກລົງ:

## ໝວດທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກໍານົດນະໂຍບາຍ, ຫຼັກການ, ລະບຽບການ, ມາດຕະການກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ, ການຕິດຕາມກວດກາວຽກງານສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະຫນາດນ້ອຍ ແລະ ກາງ ເພື່ອພັດທະນາ ແລະ ສ້າງຄວາມສາມາດໃນການແຂ່ງຂັນຂອງຈຸນລະວິສາຫະກິດ, ວິສາຫະກິດຂະຫນາດນ້ອຍ ແລະ ກາງ, ຊຸກຍູ້ການຜະລິດສິນຄ້າ, ການຄ້າ ແລະ ການບໍລິການ ແນ່ໃສ່ສ້າງວຽກເຮັດ, ສ້າງລາຍຮັບ ແລະ ຍົກສູງລະດັບຊີວິດການເປັນຢູ່ຂອງປະຊາຊົນ, ມີການພັດທະນາຢ່າງກວ້າງຂວາງ ແລະ ຍືນຍົງ ເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງ ແຂວງ ຫຼວງນໍ້າທາ ໃຫ້ເຕີບໃຫຍ່ເຂັ້ມແຂງ.

### ມາດຕາ 2 ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຂຽນຫຍໍ້ວ່າ: **ຈນກ** ແມ່ນທຸລະກິດທີ່ເຄື່ອນໄຫວຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ຂະໜາດຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງຈັດແບ່ງເປັນ 3 ຂະໜາດ ດັ່ງນີ້:

**1. ຈຸນລະວິສາຫະກິດ**

| ຂະແໜງການ | ຈຳນວນແຮງງານ (ຄົນ) | ມູນຄ່າຊັບສິນ (ກີບ) | ລວມຍອດລາຍຮັບທຸລະກິດ (ກີບ) |
|---|---|---|---|
| ການຜະລິດ | 1-5 | ບໍ່ເກີນ 120.000.000 | ບໍ່ເກີນ 400.000.000 |
| ການຄ້າ | 1-5 | ບໍ່ເກີນ 180.000.000 | ບໍ່ເກີນ 400.000.000 |
| ການບໍລິການ | 1-5 | ບໍ່ເກີນ 240.000.000 | ບໍ່ເກີນ 400.000.000 |

**2. ວິສາຫະກິດຂະໜາດນ້ອຍ**

| ຂະແໜງການ | ຈຳນວນແຮງງານ (ຄົນ) | ມູນຄ່າຊັບສິນ (ກີບ) | ລວມຍອດລາຍຮັບທຸລະກິດ (ກີບ) |
|---|---|---|---|
| ການຜະລິດ | 6-50 | ບໍ່ເກີນ 1.200.000.000 | ບໍ່ເກີນ 3.000.000.000 |
| ການຄ້າ | 6-50 | ບໍ່ເກີນ 1.200.000.000 | ບໍ່ເກີນ 4.500.000.000 |
| ການບໍລິການ | 6-50 | ບໍ່ເກີນ 1.800.000.000 | ບໍ່ເກີນ 2.250.000.000 |

**3. ວິສາຫະກິດຂະໜາດກາງ**

| ຂະແໜງການ | ຈຳນວນແຮງງານ (ຄົນ) | ມູນຄ່າຊັບສິນ (ກີບ) | ລວມຍອດລາຍຮັບທຸລະກິດ (ກີບ) |
|---|---|---|---|
| ການຜະລິດ | 51-99 | ບໍ່ເກີນ 4.800.000.000 | ບໍ່ເກີນ 6.000.000.000 |
| ການຄ້າ | 51-99 | ບໍ່ເກີນ 4.800.000.000 | ບໍ່ເກີນ 9.000.000.000 |
| ການບໍລິການ | 51-99 | ບໍ່ເກີນ 7.200.000.000 | ບໍ່ເກີນ 6.000.000.000 |

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍ ດັ່ງນີ້:

1. **ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໝາຍເຖິງ:** ຫົວໜ່ວຍທຸລະກິດທີ່ໄດ້ຂຶ້ນທະບຽນ ແລະ ເຄື່ອນໄຫວຢ່າງຖືກຕ້ອງຕາມກົດໝາຍຂອງ ສປປລາວ;
2. **ການແບ່ງຂະໜາດຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໝາຍເຖິງ:** ການກຳນົດຕາມແຕ່ລະຂະແໜງວິສາຫະກິດໂດຍຖືເອົາຈຳນວນແຮງງານສະເລ່ຍຕໍ່ປີ ຫຼື ມູນຄ່າຊັບສິນທັງໝົດ ຫຼື ລວມຍອດລາຍຮັບທຸລະກິດປະຈຳປີເປັນພື້ນຖານບ່ອນອີງ;
3. **ຜູ້ປະກອບກິດຈະການ ໝາຍເຖິງ:** ເຈົ້າຂອງ ຫຼື ຜູ້ບໍລິຫານວິສາຫະກິດທີ່ເຮັດທຸລະກິດໃດໜຶ່ງ ເພື່ອສ້າງລາຍໄດ້ທີ່ເກີດຈາກຫົວຄິດປະດິດສ້າງ, ພູມປັນຍາ ແລະ ມີຄວາມຮັບຜິດຊອບຕໍ່ຄວາມສ່ຽງທັງກຳໄລ ຂາດ ທຶນດ້ວຍຕົນເອງ;
4. **ສູນກໍ່ສ້າງຜູ້ປະກອບກິດຈະການ ໝາຍເຖິງ:** ການຈັດຕັ້ງໜຶ່ງທີ່ໃຫ້ການຊ່ວຍເຫຼືອທຸລະກິດແບບສະຕາດອັບ ແລະ ຜູ້ປະກອບກິດຈະການໃນການພັດທະນາທຸລະກິດດ້ວຍການບໍລິການວິຊາການພັດທະນາທຸລະກິດແບບຄົບວົງຈອນ ເລີ່ມຈາກການຝຶກອົບຮົມດ້ານບໍລິຫານທຸລະກິດ, ການໃຫ້ຄຳປຶກສາ, ການສະໜອງສະຖານທີ່ປະກອບກິດຈະການ ແລະ ເຂົ້າຫາແຫຼ່ງທຶນ;

5. **ທຸລະກິດສຳປະທານສິດ/ແຟຣນຊາຍ (Franchise) ໝາຍເຖິງ:** ທຸລະກິດທີ່ໄດ້ຮັບສິດ ແລະ ດຳເນີນຕາມເງື່ອນໄຂຂອງເຈົ້າຂອງຍີ່ຫໍ້ ຫຼື ຊື່ການຄ້າໃດໜຶ່ງ ທີ່ໄດ້ຈົດຊັບສິນທາງປັນຍາຖືກຕ້ອງຕາມກົດໝາຍຢູ່ ສປປ ລາວ ຫຼື ສາກົນໃນການຜະລິດ, ການຈຳໜ່າຍສິນຄ້າ ແລະ ການບໍລິການ;

6. **ຕ່ອງໂສ້ມູນຄ່າເພີ່ມ ໝາຍເຖິງ:** ບັນດາຂອດການເຄື່ອນໄຫວທຸລະກິດ ທີ່ພົວພັນກັນເຊິ່ງເລີ່ມຈາກຂອດວັດຖຸດິບ ເພື່ອສະໜອງໃຫ້ແກ່ການຜະລິດ, ການແປຮູບ, ການຄ້າ, ການຕະຫຼາດ ຈົນເຖິງການຊົມໃຊ້ສຳລັບສິນຄ້າໃດໜຶ່ງ;

7. **ຜະລິດຕະພາບ ໝາຍເຖິງ:** ປະສິດທິພາບ ແລະ ປະສິດທິຜົນຂອງການເຄື່ອນໄຫວອົງກອນ, ການຜະລິດທຸລະກິດ ໂດຍເປັນການປຽບທຽບ ລະຫວ່າງ ຜົນໄດ້ຮັບ ແລະ ປັດໄຈນຳເຂົ້າ ເຊັ່ນ: ແຮງງານ, ທຶນ, ວັດຖຸດິບ ແລະ ເວລາ;

8. **ການບໍລິການວິຊາການເພື່ອພັດທະນາທຸລະກິດ ໝາຍເຖິງ:** ການສະໜອງບໍລິການດ້ານວິຊາການຂອງການຈັດຕັ້ງ ແລະ ບຸກຄົນ ເພື່ອປັບປຸງ **ຈນກ** ດ້ວຍຮູບແບບຕ່າງໆ ເຊັ່ນ: ການຝຶກອົບຮົມ, ການຖ່າຍທອດເຕັກໂນໂລຊີ, ການວາງແຜນທຸລະກິດ, ການຕະຫຼາດ, ການໃຫ້ການປຶກສາ, ການແນະນຳ, ການວິໄຈ, ການສະໜອງຂໍ້ມູນ-ຂ່າວສານ ແລະ ອື່ນໆ;

9. **ການຮ່ວມກຸ່ມທຸລະກິດ ໝາຍເຖິງ:** ການຮ່ວມມືຂອງບັນດາຫົວໜ່ວຍທຸລະກິດໃນຂະແໜງດຽວກັນ ຫຼື ກ່ຽວພັນກັນ ແລະ ມີທີ່ຕັ້ງໃນບໍລິເວນດຽວກັນ ໂດຍໝູນໃຊ້ທ່າແຮງຂອງແຕ່ລະຫົວໜ່ວຍທຸລະກິດເຂົ້າໃນການຮ່ວມມືກັນ ເພື່ອເຮັດໃຫ້ຫຼຸດຕົ້ນທຶນ ແລະ ສ້າງຄວາມສາມາດໃນການແຂ່ງຂັນ;

10. **ທຸລະກິດແບບສະຕາດອັບ (Startup) ໝາຍເຖິງ:** ທຸລະກິດ ຫຼື ໂຄງການທຸລະກິດຮູບແບບໃໝ່ດ້ວຍການນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳດ້ານຕ່າງໆ ຊຶ່ງມີຮູບແບບທຸລະກິດທີ່ຮອງຮັບການຂະຫຍາຍ ຕົວໃນຈັງຫວະທີ່ໄວໄດ້;

11. **ນະວັດຕະກຳ ໝາຍເຖິງ:** ການປະດິດສ້າງ, ການພັດທະນາ ແລະ ການນຳສະເໜີຜະລິດຕະພັນ, ຂະບວນການ ຫຼື ການບໍລິການແນວໃໝ່ ເພື່ອເພີ່ມປະສິດທິພາບ, ປະສິດທິຜົນ ແລະ ຄວາມສາມາດໃນການແຂ່ງຂັນ;

12. **ສະຖານທີ່ເຮັດວຽກຮ່ວມ ໝາຍເຖິງ:** ສະຖານທີ່ເຮັດວຽກທີ່ສາມາດໃຊ້ຮ່ວມກັນ ທີ່ເປີດໃຫ້ບໍລິການທົ່ວໄປໂດຍມີອຸປະກອນ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ;

13. **ລະບົບນິເວດທາງທຸລະກິດ ໝາຍເຖິງ:** ບັນດາເຄືອຂ່າຍໜ່ວຍງານ ແລະ ອົງການທີ່ກ່ຽວຂ້ອງກັບທຸລະກິດທີ່ແຂ່ງຂັນ ແລະ ຮ່ວມມືກັນໃນການຜະລິດ ແລະ ສົ່ງມອບສິນຄ້າ ແລະ ບໍລິການ;

14. **ກອງທຶນລົງທຶນອິດສະຫຼະ ໝາຍເຖິງ:** ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ສະໜອງທຶນໂດຍກົງໃຫ້ແກ່ທຸລະກິດແບບສະຕາດອັບ ໃນໄລຍະເລີ່ມຕົ້ນ;

15. **ການລະດົມທຶນຈາກບຸກຄົນທົ່ວໄປ ໝາຍເຖິງ:** ການລະດົມທຶນຈາກບຸກຄົນທົ່ວໄປຢ່າງກວ້າງຂວາງເພື່ອເຮັດທຸລະກິດ;

16. **ກອງທຶນຮ່ວມລົງທຶນ ໝາຍເຖິງ:** ກອງທຶນທີ່ໄດ້ຮັບການສ້າງຕັ້ງ ແລະ ລະດົມທຶນຈາກບຸກຄົນ ຫຼື ນິຕິ ບຸກຄົນ ເພື່ອລົງທຶນໃສ່ທຸລະກິດແບບສະຕາດອັບ ຫຼື ທຸລະກິດຂະໜາດນ້ອຍທີ່ມີທ່າແຮງພັດທະນາໃນໄລຍະຍາວ;

17. **ພລັດຟອມ ໝາຍເຖິງ:** ແບບຈຳລອງທຸລະກິດທີ່ຊ່ວຍໃນການແລກປ່ຽນສິນຄ້າ ແລະ ບໍລິການ ລະຫວ່າງ ຜູ້ຜະລິດ ແລະ ຜູ້ບໍລິໂພກ.

**ມາດຕາ 4 ນະໂຍບາຍຂອງແຂວງກ່ຽວກັບວຽກງານສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ**

ແຂວງຊຸກຍູ້ ແລະ ສົ່ງເສີມການພັດທະນາ **ຈນກ** ດ້ວຍການສະໜັບສະໜູນທາງດ້ານທຶນຮອນ, ວິຊາການ, ເຕັກໂນໂລຊີ, ການຕະຫຼາດ, ການຄົ້ນຄວ້າທາງດ້ານວິທະຍາສາດ ແລະ ອື່ນໆ ເພື່ອສ້າງຄວາມສາມາດໃນການແຂ່ງຂັນດ້ານການຜະລິດ, ການຄ້າ ແລະ ການບໍລິການ ຖືກຕ້ອງຕາມແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດທີ່ໄດ້ກຳນົດໄວ້.

**ມາດຕາ 5 ຫຼັກການກ່ຽວກັບວຽກງານສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ**

ວຽກງານສົ່ງເສີມ **ຈນກ** ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບນະໂຍບາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ, ຂອງເມືອງ, ຂະແໜງການ ແລະ ສອດຄ່ອງກັບເງື່ອນໄຂຂອງຂະແໜງການ **ຈນກ** ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 7 ຂອງຂໍ້ຕົກລົງສະບັບນີ້;
2. ຮັບປະກັນໃຫ້ **ຈນກ** ໄດ້ຮັບການສ້າງຕັ້ງ, ດຳເນີນ ແລະ ພັດທະນາດ້ວຍຄວາມສະດວກ, ວ່ອງໄວ, ໂປ່ງໃສ ແລະ ຍຸຕິທຳ;
3. ຮັບປະກັນການສ້າງວຽກເຮັດງານທຳ ແລະ ຍົກສູງຄຸນນະພາບຊີວິດຂອງປະຊາຊົນ;
4. ຮັບຮູ້, ຮັບປະກັນ ການປົກປ້ອງກຳມະສິດ ແລະ ສິດຜົນປະໂຫຍດ ທີ່ຖືກຕ້ອງຕາມກົດໝາຍວ່າດ້ວຍ **ຈນກ**;
5. ປົກປັກຮັກສາ ແລະ ຟື້ນຟູຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ ແລະ ຮັບປະກັນຄວາມປອດໄພຂອງສັງຄົມ.

**ມາດຕາ 6 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ໃຊ້ສຳລັບບຸກຄົນ, ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນທຸລະກິດຢູ່ພາຍໃນແຂວງຫຼວງນ້ຳທາ ເທົ່ານັ້ນ.

## ໝວດທີ II

## ຂະແໜງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

**ມາດຕາ 7 ຂະແໜງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ**

ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງແບ່ງອອກເປັນ 3 ຂະແໜງ ດັ່ງນີ້:

1. **ຂະແໜງການຜະລິດ**

1) ການຜະລິດດ້ານກະສິກຳ:

- ການປູກຝັງ: ປູກຜັກອິນຊີ, ຜັກກາດຂາວ, ຜັກສະລັດ, ເຂົ້າ, ມັນຕົ້ນ, ມັນດ້າງ, ອ້ອຍ, ສາລີ, ຊາ, ຫົວກະລົດ, ຫົວຜັກບົ່ວໃຫຍ່, ໝາກເຜັດ, ໝາກເລັ່ນ, ມັນຝຣັ່ງ, ໝາກຫຸ່ງ, ໝາກເຍົາ, ຜັກທຽມ, ຂີງ , ຖົ່ວດິນ, ຖົ່ວເຫຼືອງຝັກສົດ, ຖົ່ວເບີ, ຖົ່ວຍາວ, ດອກໄມ້, ປູກມອນ-ລ້ຽງມ້ອນ, ປູກຝ້າຍ, ພືດສະໝູນໄພ, ກ້ວຍ, ໝາກໂມ, ໝາກນອດ, ໝາກກ້ຽງເປືອກໜາ, ໝາກກ້ຽງຂຽວ, ໝາກກ້ຽງນ້ອຍ, ໝາກພຸກ, ໝາກນາວເຫຼືອງ, ໝາກມັງກອນ, ໝາກມ່ວງ, ໝາກມີ້, ຢາຫົວ, ເຄື່ອງແດງດ່າງ, ຫຍ້າເນເປຍ, ໃບຢາສູບແຫ້ງ, ປູກຕົ້ນຢາງພາລາ ແລະ ພືດສິນເປັນສິນຄ້າ ອື່ນໆ;
- ການລ້ຽງສັດ ແລະ ການປະມົງ: ລ້ຽງສັດປະເພດງົວ, ຄວາຍ, ລ້ຽງໝູ, ແບ້, ສັດປີກ, ລ້ຽງປາ ແລະ ອື່ນໆ;

2) ອຸດສາຫະກຳປຸງແຕ່ງ: ການປຸງແຕ່ງໂຮງງານຂ້າສັດ,ໂຮງງານແປຮູບຊີ້ນ, ໂຮງງານແປຮູບວັດຖຸດິບພາຍໃນໂຮງງານປຸງແຕ່ງອາຫານ, ໂຮງງານປຸງແຕ່ງຢາງພາລາ, ໂຮງງານຫຸ້ມຫໍ່, ສາງເຢັນ, ໂຮງອົບພືດກະສິກຳ ແລະ ອື່ນໆ.

3) ຫັດຖະກຳ: ເຄື່ອງຫັດຖະກຳແຜ່ນແພ, ຫັດຖະກຳຈັກສານ, ຫັດຖະກຳປັກແສ່ວ ແລະ ອື່ນໆ;

2. **ຂະແໜງການຄ້າ**

- ຮ້ານຄ້າສະອາດ, ຕະຫຼາດສະອາດ, ຂາຍຍົກ-ຂາຍຍ່ອຍ, ການຈັດວາງສະແດງສິນຄ້າ, ໂຄສະນາສິນຄ້າ ພູມປັນຍາ, ການສົ່ງອອກ-ນຳເຂົ້າສິນຄ້າ ແລະ ອື່ນໆ.

3. **ຂະແໜງການບໍລິການ**

- ໂຮງແຮມ, ເຮືອນພັກ, ລີສອດ, ພັດຕະຄານ, ຮ້ານອາຫານ, ການທ່ອງທ່ຽວ, ການບໍລິການຂົນສົ່ງ, ການສຶກສາ, ສະຖາບັນການເງິນ ແລະ ອື່ນໆ.

**ມາດຕາ 8 ຂັ້ນຕອນການສ້າງຕັ້ງ ແລະ ການແບ່ງຂັ້ນພິຈາລະນາແຈ້ງຂຶ້ນທະບຽນຂອງ ຈນກ**

ຂັ້ນຕອນການສ້າງຕັ້ງວິສາຫະກິດ **ຈນກ** ແມ່ນໃຫ້ປະຕິບັດຕາມກົດໝາຍວ່າດ້ວຍວິສາຫະກິດ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013 ແລະ ຂໍ້ຕົກລົງ ການຂຶ້ນທະບຽນວິສາຫະກິດ ເລກທີ 0023/ອຄ.ກທຄວ, ລົງວັນທີ 09 ມັງກອນ 2019 ຂອງກະຊວງອຸດສາຫະກຳ ແລະ ການຄ້າ.

## ໝວດທີ III

## ນະໂຍບາຍສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

**ມາດຕາ 9 ນະໂຍບາຍສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ**

ການສົ່ງເສີມ **ຈນກ** ປະກອບດ້ວຍ ນະໂຍບາຍ ດັ່ງນີ້;

1. ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການດຳເນີນທຸລະກິດ;
2. ການເຂົ້າເຖິງແຫຼ່ງທຶນ;
3. ການໃຫ້ນະໂຍບາຍ ດ້ານພາສີ, ອາກອນ ແລະ ບັນຊີ;
4. ການສ້າງ ແລະ ພັດທະນາຜູ້ປະກອບກິດຈະການ;
5. ການບໍລິການວິຊາການເພື່ອພັດທະນາທຸລະກິດ;
6. ການຮ່ວມມື ລະຫວ່າງ **ຈນກ** ກັບວິສາຫະກິດຂະໜາດໃຫຍ່;
7. ການເພີ່ມຜະລິດຕະພາບ ແລະ ຄຸນນະພາບ;
8. ການເຂົ້າເຖິງ ແລະ ຂະຫຍາຍຕະຫຼາດ;
9. ການຮ່ວມກຸ່ມທຸລະກິດ;
10. ການພັດທະນາສະຖານທີ່ປະກອບກິດຈະການ;
11. ການນຳໃຊ້ເຕັກໂນໂລຊີທີ່ກ້າວໜ້າ ແລະ ເປັນມິດຕໍ່ສິ່ງແວດລ້ອມ;
12. ການນຳໃຊ້ ແລະ ການປົກປ້ອງສິດທາງດ້ານຊັບສິນທາງປັນຍາ;
13. ການສະໜອງ ແລະ ເຂົ້າເຖິງຂໍ້ມູນ-ຂ່າວສານ;
14. ການສົ່ງເສີມປັດໃຈດ້ານການຜະລິດ;
15. ການສົ່ງເສີມການປະດິດ ແລະ ນຳໃຊ້ນະວັດຕະກຳ;
16. ການສົ່ງເສີມທຸລະກິດແບບສະຕາດອັບ;
17. ການເຂົ້າເຖິງການຈັດຊື້-ຈັດຈ້າງ;
18. ນະໂຍບາຍອື່ນ ທີ່ລັດຖະບານກຳນົດໃນແຕ່ລະໄລຍະ.

**ມາດຕາ 10 ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍ ໃຫ້ແກ່ການດຳເນີນທຸລະກິດ**

1. ຜັນຂະຫຍາຍນິຕິກຳໃຫ້ລະອຽດ, ຄົບຖ້ວນ, ສົມບູນ ແລະ ຮັດກຸມພ້ອມທັງກຳນົດວິທີການຄຸ້ມຄອງ ແລະ ບໍລິຫານຂອງແຂວງ ເພື່ອອຳນວຍຄວາມສະດວກໃຫ້ການສ້າງຕັ້ງ, ດຳເນີນ ແລະ ພັດທະນາທຸລະກິດ ເຮັດໃຫ້ຫຼຸດຜ່ອນຕົ້ນທຶນ, ເວລາໃນການສ້າງຕັ້ງ ແລະ ການເຄື່ອນໄຫວທຸລະກິດ;

2. ຕິດຕາມ, ເກັບກຳຂໍ້ມູນ ແລະ ປະເມີນຜົນນິຕິກຳທັງກ່ອນ ແລະ ຫຼັງການຈັດຕັ້ງປະຕິບັດເພື່ອຮັບປະກັນປະສິດທິພາບ ແລະ ປະສິດທິຜົນ ຂອງການຈັດຕັ້ງປະຕິບັດນິຕິກຳ ທີ່ປະກາດໃຊ້ໃນແຕ່ລະໄລຍະ;
3. ສ້າງເວທີປຶກສາຫາລື ລະຫວ່າງ ພາກລັດ ແລະ ພາກທຸລະກິດ ເພື່ອແກ້ໄຂບັນຫາທີ່ເປັນການກີດຫນ່ວງການພັດທະນາຂອງທຸລະກິດ;
4. ສ້າງ ແລະ ພັດທະນາບຸກຄະລະກອນ ເພື່ອຍົກສູງປະສິດທິພາບ ແລະ ປະສິດທິຜົນໃນການບໍລິການສ້າງຕັ້ງ ແລະ ເຄື່ອນໄຫວທຸລະກິດ.

**ມາດຕາ 11 ການເຂົ້າເຖິງແຫຼ່ງທຶນ**

ອຳນວຍຄວາມສະດວກ, ສ້າງຄວາມເຂັ້ມແຂງໃຫ້ **ຈນກ** ຮູ້ຫຼັກການ ແລະ ວິທີການເຂົ້າເຖິງແຫຼ່ງທຶນດ້ວຍຮູບການຈັດຝຶກອົບຮົມ ຫຼັກການຂອງການບໍລິຫານດ້ານການເງິນ, ການບັນຊີ ແລະ ການຂຽນແຜນທຸລະກິດ ເພື່ອສ້າງເງື່ອນໄຂໃຫ້ວິສາຫະກິດ ໃນການເຂົ້າຫາແຫຼ່ງທຶນ.

**ມາດຕາ 12 ການໃຫ້ນະໂຍບາຍດ້ານພາສີ, ອາກອນ ແລະ ບັນຊີ**

1. ໃຫ້ນະໂຍບາຍສົ່ງເສີມດ້ານພາສີ ແລະ ອາກອນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ;
2. ສ້າງກົນໄກອຳນວຍຄວາມສະດວກໃຫ້ **ຈນກ** ນຳໃຊ້ລະບົບບັນຊີວິສາຫະກິດ ຂອງ ສປປ ລາວ.

**ມາດຕາ 13 ການສ້າງ ແລະ ພັດທະນາຜູ້ປະກອບກິດຈະການ**

1. ສົ່ງເສີມພາກສ່ວນຕ່າງໆ ລົງທຶນສ້າງສູນຝຶກອົບຮົມ ຕາມຂະແໜງການຕົນເພື່ອສ້າງ ແລະ ພັດທະນາຜູ້ປະກອບກິດຈະການ ໂດຍສະເພາະຜູ້ປະກອບກິດຈະການເພດຍິງ, ໄວຫນຸ່ມ ແລະ ຄົນພິການໃຫ້ຮູ້ກ່ຽວກັບການເລີ່ມຕົ້ນ ແລະ ດຳເນີນທຸລະກິດໃນຮູບແບບຕ່າງໆ;
2. ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ເກີດມີທຸລະກິດແບບສະຕາດອັບ, ທຸລະກິດແຟຣນຊາຍ (Franchise) ແລະ ຮູບແບບອື່ນທີ່ກະຕຸ້ນໃຫ້ເກີດມີຜູ້ປະກອບກິດຈະການໃໝ່;
3. ໃຫ້ການຊ່ວຍເຫຼືອຜູ້ປະກອບກິດຈະການໃນການພັດທະນາຕົນເອງດ້ວຍການຈັດຝຶກອົບຮົມ, ສະໜອງທຶນ ສົມທົບ ຫຼື ສ້າງເງື່ອນໄຂໃຫ້ໄດ້ເຂົ້າຮ່ວມການຍົກລະດັບຄວາມຮູ້ທັງຢູ່ພາຍໃນ ແລະ ຕ່າງປະເທດ;
4. ສ້າງ ແລະ ບັນຈຸການຮຽນຮູ້ ກ່ຽວກັບການປະກອບກິດຈະການເຂົ້າໃນຫຼັກສູດໃນລະບົບການສຶກສາ;
5. ສົ່ງເສີມການຈັດກິດຈະກຳ ກ່ຽວກັບການສ້າງຜູ້ປະກອບກິດຈະການ ເຊັ່ນ: ການປະກວດແຜນທຸລະກິດ, ຈຳລອງການປະກອບກິດຈະການ, ການຍ້ອງຍໍຜູ້ປະກອບກິດຈະການດີເດັ່ນ.

**ມາດຕາ 14 ການບໍລິການວິຊາການເພື່ອພັດທະນາທຸລະກິດ**

1. ຊຸກຍູ້, ສົ່ງເສີມ, ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ ໃຫ້ພາກສ່ວນຕ່າງໆສ້າງຕັ້ງໜ່ວຍງານ ຫຼື ວິສາຫະກິດໃຫ້ບໍລິການວິຊາການ ເພື່ອພັດທະນາທຸລະກິດ;
2. ສົ່ງເສີມການສ້າງຊ່ຽວຊານດ້ານຕ່າງໆ ແລະ ການສ້າງເຄືອຂ່າຍຜູ້ສະໜອງບໍລິການວິຊາການ ເພື່ອໃຫ້ບໍລິການແກ່ **ຈນກ** ຢ່າງກວ້າງຂວາງ ແລະ ແທດເໝາະກັບຄວາມຕ້ອງການ;
3. ໃຫ້ການສະໜັບສະໜູນທາງດ້ານທຶນຮອນໃນຮູບແບບຕ່າງໆໃຫ້ **ຈນກ**;
4. ເພື່ອເຂົ້າເຖິງການບໍລິການວິຊາການ ເພື່ອພັດທະນາທຸລະກິດ.

**ມາດຕາ 15 ການຮ່ວມມື ລະຫວ່າງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ກັບ ວິສາຫະກິດຂະໜາດໃຫຍ່**

1. ສ້າງນະໂຍບາຍ ແລະ ກົນໄກທີ່ເອື້ອອຳນວຍ ເພື່ອໃຫ້ມີການຮ່ວມມືກັນ ລະຫວ່າງ **ຈນກ** ກັບວິສາຫະກິດຂະໜາດໃຫຍ່;

2. ຊຸກຍູ້ວິສາຫະກິດຂະໜາດໃຫຍ່ໃຫ້ໂອກາດ ແລະ ບູລິມະສິດແກ່ **ຈນກ** ເປັນຜູ້ສະໜອງວັດຖຸດິບ, ວັດຖຸເຄິ່ງສຳເລັດຮູບ, ສິນຄ້າ ແລະ ການບໍລິການລວມທັງການຮັບເໝົາຕໍ່ຊ່ວງ ພ້ອມທັງສ້າງຄວາມເຂັ້ມແຂງໃຫ້ແກ່ **ຈນກ** ໂດຍການຖ່າຍທອດເຕັກໂນໂລຊີ ແລະ ຄວາມຮູ້ຄວາມສາມາດທາງດ້ານການບໍລິຫານ;
3. ສ້າງເວທີ ແລະ ສ້າງເງື່ອນໄຂໃຫ້ **ຈນກ** ແລະ ວິສາຫະກິດຂະໜາດໃຫຍ່ ໄດ້ພົບປະ ແລະ ແລກປ່ຽນຂໍ້ມູນດ້ວຍຮູບແບບຕ່າງໆ ເພື່ອສ້າງໂອກາດທາງທຸລະກິດຮ່ວມກັນ;
4. ຊຸກຍູ້, ສົ່ງເສີມ **ຈນກ** ໃນການປັບປຸງຄວາມສາມາດບໍລິຫານຈັດການ ແລະ ພັດທະນາເຕັກໂນໂລຊີ ເພື່ອຮັບປະກັນການສະໜອງສິນຄ້າ ແລະ ການບໍລິການໃຫ້ມີຄຸນນະພາບ ແລະ ມີປະລິມານພຽງພໍກັບຄວາມຕ້ອງຂອງວິສາຫະກິດຂະໜາດໃຫຍ່.

**ມາດຕາ 16 ການເພີ່ມຜະລິດຕະພາບ ແລະ ຄຸນນະພາບ**

1. ປັບປຸງແບບແຜນວິທີເຮັດວຽກ ແລະ ພັດທະນາສີມືແຮງງານ, ຍົກສູງສະຕິການອອກແຮງງານໄປສູ່ຮູບແບບອຸດສາຫະກຳ ແລະ ມີລັກສະນະປະດິດສ້າງເພື່ອຍົກສູງຄວາມສາມາດໃນການແຂ່ງຂັນ ແລະ ການພັດທະນາແບບຍືນຍົງຂອງ **ຈນກ**;
2. ສົ່ງເສີມ ແລະ ຊ່ວຍເຫຼືອຜູ້ປະກອບກິດຈະການ ໃຫ້ໄດ້ຮັບການບໍລິການຄຳປຶກສາເພື່ອໃຫ້ **ຈນກ** ໄດ້ຮັບການຢັ້ງຢືນດ້ານຜະລິດຕະພາບ, ຄຸນນະພາບລະດັບຊາດ ແລະ ສາກົນ ເຊັ່ນ: ລະບົບບໍລິຫານຈັດການດ້ານອາຫານປອດໄພ, ລະບົບບໍລິຫານຈັດການດ້ານຄຸນນະພາບ, ລະບົບບໍລິຫານຈັດການດ້ານສິ່ງແວດລ້ອມ, ລະບົບບໍລິການຈັດການດ້ານການເພີ່ມຜະລິດຕະພາບ ແລະ ລະບົບອື່ນໆ;
3. ສະໜັບສະໜູນໂຄງການຕ່າງໆກ່ຽວກັບການຍົກສູງປະສິດທິພາບ ແລະ ປະສິດທິຜົນຂອງການຜະລິດສິນຄ້າ, ການຄ້າ ແລະ ການບໍລິການເຊັ່ນ: ການບຳລຸງຍົກລະດັບຜູ້ປະກອບກິດຈະການ, ການພັດທະນາສີມືແຮງງານ, ການນຳໃຊ້ເຕັກໂນໂລຊີທີ່ກ້າວໜ້າ, ການປັບປຸງຄຸນນະພາບ, ມາດຕະຖານຜະລິດຕະພັນ ແລະ ການບໍລິການ.

**ມາດຕາ 17 ການເຂົ້າເຖິງ ແລະ ຂະຫຍາຍຕະຫຼາດ**

1. ສ້າງເງື່ອນໄຂໃຫ້ພາກສ່ວນຕ່າງໆຈັດງານວາງສະແດງສິນຄ້າ ແລະ ການບໍລິການຢູ່ພາຍໃນ ແລະ ຕ່າງປະເທດ ພ້ອມທັງສ້າງເງື່ອນໄຂ ແລະ ໃຫ້ການຊ່ວຍເຫຼືອຜູ້ປະກອບກິດຈະການສາມາດເຂົ້າຮ່ວມງານວາງສະແດງສິນຄ້າຢູ່ພາຍໃນ ແລະ ຕ່າງປະເທດ, ສ້າງເວທີໃຫ້ມີການຈັບຄູ່ໃນການຊື້-ຂາຍສິນຄ້າ;
2. ສົ່ງເສີມໃຫ້ **ຈນກ** ເຂົ້າຮ່ວມໃນຕ່ອງໂສ້ມູນຄ່າເພີ່ມຢູ່ພາຍໃນ, ພາກພື້ນ ແລະ ສາກົນ;
3. ສົ່ງເສີມການໂຄສະນາສິນຄ້າ ແລະ ການບໍລິການດ້ວຍຮູບແບບຕ່າງໆໂດຍປັບປຸງຂັ້ນຕອນ ແລະ ຂໍ້ຈຳກັດຕ່າງໆ ໃນການໂຄສະນາສິນຄ້າ ແລະ ການບໍລິການ;
4. ສ້າງ ແລະ ພັດທະນາ ພລັດຟອມ ການຄ້າທາງເອເລັກໂຕຣນິກ ລວມທັງສ້າງເງື່ອນໄຂການຊຳລະສະສາງ ແລະ ການສົ່ງມອບສິນຄ້າ ແລະ ການບໍລິການ, ສ້າງເງື່ອນໄຂໃຫ້ **ຈນກ** ນຳໃຊ້ ພລັດຟອມ ດັ່ງກ່າວ ເພື່ອໂຄສະນາ ແລະ ຈຳໜ່າຍສິນຄ້າທັງຢູ່ພາຍໃນ ແລະ ຕ່າງປະເທດ;
5. ຊຸກຍູ້, ສົ່ງເສີມການສຶກສາຄົ້ນຄວ້າກ່ຽວກັບຕະຫຼາດທັງພາຍໃນ ແລະ ຕ່າງປະເທດ ເພື່ອສະໜອງຂໍ້ມູນກ່ຽວກັບຄວາມຕ້ອງການຂອງຕະຫຼາດ ພ້ອມທັງໃຫ້ຄຳແນະນຳ ແກ່ຜູ້ປະກອບກິດຈະການໃຫ້ຜະລິດແທດເໝາະກັບຄວາມຕ້ອງການຂອງຕະຫຼາດ;
6. ຊຸກຍູ້ ແລະ ສົ່ງເສີມການແຂ່ງຂັນທາງທຸລະກິດໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 18 ການຮ່ວມກຸ່ມທຸລະກິດ**

1. ສົ່ງເສີມໃຫ້ມີການຮ່ວມມືກັນໃນການນຳໃຊ້ເຄື່ອງມືການຜະລິດ, ການຄ້າ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ຮ່ວມກັນ ເພື່ອຫຼຸດຜ່ອນຕົ້ນທຶນການຜະລິດ, ການຄ້າ ແລະ ການບໍລິການ, ຍົກສູງຄວາມສາມາດໃນການສະໜອງສິນຄ້າ ແລະ ການບໍລິການ ເພື່ອເພີ່ມຄວາມສາມາດໃນການແຂ່ງຂັນ;
2. ສ້າງເວທີ ແລະ ສ້າງເງື່ອນໄຂໃຫ້ **ຈນກ** ມີການປຶກສາຫາລື, ເກັບກຳ ແລະ ສະໜອງຂໍ້ມູນໃຫ້ກັນກ່ຽວກັບຄວາມສາມາດຂອງການຜະລິດ, ການຄ້າ ແລະ ການບໍລິການ ເພື່ອນຳໃຊ້ທ່າແຮງຮ່ວມກັນ.

**ມາດຕາ 19 ການພັດທະນາສະຖານທີ່ປະກອບກິດຈະການ**

1. ສ້າງ, ປັບປຸງນະໂຍບາຍ, ກົດໝາຍ ແລະ ລະບຽບການກ່ຽວກັບການພັດທະນາສະຖານທີ່ປະກອບກິດຈະການ ເປັນຕົ້ນ ເຂດການຜະລິດ, ສູນການຄ້າ, ຮ້ານຊັບພະສິນຄ້າ ແລະ ຕະຫຼາດ, ນິຄົມອຸດສາຫະກຳ ແລະ ເຂດການລົງທຶນຕ່າງໆ;
2. ຊຸກຍູ້, ສົ່ງເສີມ ແລະ ອຳນວຍຄວາມສະດວກໃນການສ້າງໂຄງລ່າງພື້ນຖານໃຫ້ແກ່ສະຖານທີ່ປະກອບກິດຈະການ ແລະ ສ້າງເງື່ອນໄຂໃຫ້ຜູ້ປະກອບກິດຈະການ **ຈນກ** ສາມາດນຳໃຊ້ສະຖານທີ່ປະກອບກິດຈະການທີ່ໝັ້ນຄົງໃນການດຳເນີນທຸລະກິດ;
3. ຊຸກຍູ້, ສົ່ງເສີມພາກສ່ວນຕ່າງໆໃຫ້ປົກປ້ອງສະຖານທີ່ປະກອບກິດຈະການຂອງ **ຈນກ** ເພື່ອຫຼຸດຜ່ອນ ຫຼື ຫຼີກລ້ຽງຜົນກະທົບຈາກໂຄງການພັດທະນາຕ່າງໆ. ຂະແໜງການອຸດສາຫະກຳ ແລະ ການຄ້າ ປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ສ້າງແຜນກຳນົດສະຖານທີ່ປະກອບກິດຈະການທັງໄລຍະສັ້ນ ແລະ ໄລຍະຍາວ ເພື່ອຮອງຮັບການຂະຫຍາຍຕົວຂອງ **ຈນກ** ໃນແຕ່ລະໄລຍະ.

**ມາດຕາ 20 ການນຳໃຊ້ເຕັກໂນໂລຊີທີ່ກ້າວຫນ້າ ແລະ ເປັນມິດຕໍ່ສິ່ງແວດລ້ອມ**

1. ຊຸກຍູ້, ສົ່ງເສີມ **ຈນກ** ຄົ້ນຄວ້າ ແລະນຳໃຊ້ເຕັກໂນໂລຊີທີ່ກ້າວໜ້າ ແລະ ເປັນມິດຕໍ່ສິ່ງແວດລ້ອມເຂົ້າໃນການຜະລິດສິນຄ້າ, ການຄ້າ ແລະ ການບໍລິການ;
2. ສະໜອງທຶນໃນຮູບແບບຕ່າງໆໃຫ້ **ຈນກ** ນຳໃຊ້ເຂົ້າໃນການປັບປຸງເຕັກໂນໂລຊີໃຫ້ທັນສະໄໝ ແລະ ແທດເໝາະກັບການດຳເນີນທຸລະກິດ;
3. ຊຸກຍູ້, ສົ່ງເສີມສະຖາບັນຄົ້ນຄວ້າ ແລະ ສະຖາບັນການສຶກສາ ຄົ້ນຄວ້າ ແລະ ພັດທະນາເຕັກໂນໂລຊີທີ່ກ້າວຫນ້າ ແລະ ເປັນມິດຕໍ່ສິ່ງແວດລ້ອມ ເພື່ອຖ່າຍທອດໃຫ້ **ຈນກ** ນຳໃຊ້ເຂົ້າໃນການດຳເນີນການຜະລິດສິນຄ້າ ແລະ ການບໍລິການໃຫ້ມີຜະລິດຕະພາບ ແລະ ຄຸນນະພາບສູງຂຶ້ນ ພ້ອມທັງເປັນມິດຕໍ່ສິ່ງແວດລ້ອມ.

**ມາດຕາ 21 ການນຳໃຊ້ ແລະ ປົກປ້ອງສິດທາງດ້ານຊັບສິນທາງປັນຍາ**

1. ສ້າງເງື່ອນໄຂສະດວກໃຫ້ **ຈນກ** ປະດິດສ້າງ, ປະດິດຄິດແຕ່ງ, ສ້າງເສດຖະກິດພູມປັນຍາ ແລະ ນຳໃຊ້ສິດ ທາງດ້ານຊັບສິນທາງປັນຍາ;
2. ຊ່ວຍເຫຼືອ **ຈນກ** ຈົດທະບຽນ, ຄຸ້ມຄອງ ແລະ ປົກປ້ອງສິດທາງດ້ານຊັບສິນທາງປັນຍາ;
3. ໂຄສະນາເຜີຍແຜ່ກົດຫມາຍ ແລະ ລະບຽບການກ່ຽວກັບການນຳໃຊ້ ແລະ ການປົກປ້ອງສິດທາງດ້ານຊັບສິນທາງປັນຍາໃຫ້ **ຈນກ** ຮັບຮູ້ຢ່າງທົ່ວເຖິງ ເພື່ອໃຫ້ຮູ້ວິທີການນຳໃຊ້, ການປົກປ້ອງ ແລະ ຜົນປະໂຫຍດທີ່ໄດ້ຮັບຈາກການປົກປ້ອງສິດທາງດ້ານຊັບສິນທາງປັນຍາ.

**ມາດຕາ 22 ການສະໜອງ ແລະ ການເຂົ້າເຖິງຂໍ້ມູນຂ່າວສານ**

1. ສະໜອງຂໍ້ມູນ-ຂ່າວສານດ້ານນະໂຍບາຍ, ນິຕິກຳ ແລະ ຂໍ້ມູນ-ຂ່າວສານອື່ນ ກ່ຽວກັບການດຳເນີນທຸລະກິດ ດ້ວຍຮູບແບບຕ່າງໆ ເປັນຕົ້ນ ຈັດກອງປະຊຸມເຜີຍແຜ່ແນະນຳ, ເຜີຍແຜ່ໃນຮູບແບບເອເລັກໂຕຣນິກ, ປື້ມຄູ່ມື, ວາລະສານ, ແຜ່ນພັບໂຄສະນາຜ່ານສື່ມວນຊົນ;

2. ສົ່ງເສີມທັງພາກລັດ ແລະ ພາກທຸລະກິດໃນການສ້າງສູນສະໜອງຂໍ້ມູນ-ຂ່າວສານ ກ່ຽວກັບການດໍາເນີນທຸລະກິດ ເພື່ອສະໜອງໃຫ້ **ຈນກ** ຢ່າງທົ່ວເຖິງ.

**ມາດຕາ 23 ການສົ່ງເສີມປັດໃຈດ້ານການຜະລິດ**

1. ຊຸກຍູ້, ສົ່ງເສີມພາກສ່ວນຕ່າງໆ ໃນການຄົ້ນຄວ້າສ້າງນະໂຍບາຍ ແລະ ນິຕິກໍາ ກ່ຽວກັບການສົ່ງເສີມປັດໃຈດ້ານການຜະລິດຂອງ **ຈນກ** ເປັນຕົ້ນການຫຼຸດຜ່ອນຕົ້ນທຶນ ເຊັ່ນ: ຝຸ່ນ, ປຸຍ, ແນວພັນ (ພືດ, ສັດ), ອຸປະກອນ, ພາຫະນະຮັບໃຊ້ການຜະລິດ ແລະ ອື່ນໆ ທີ່ຕິດພັນກັບໂຄງປະກອບຕົ້ນທຶນການຜະລິດ;
2. ຊຸກຍູ້ ແລະ ຕິດຕາມກວດກາ ພາກສ່ວນກ່ຽວຂ້ອງໃນການຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບການສົ່ງເສີມປັດໃຈດ້ານການຜະລິດໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 24 ການສົ່ງເສີມການປະດິດ ແລະ ນໍາໃຊ້ນະວັດຕະກໍາ**

1. ຊຸກຍູ້, ສົ່ງເສີມ **ຈນກ** ໃນການປະດິດ ແລະ ນໍາໃຊ້ນະວັດຕະກໍາດ້ານຕ່າງໆ ເປັນຕົ້ນ ນະວັດຕະກໍາດ້ານເຕັກໂນໂລຊີໃນການຜະລິດ, ການອອກແບບ, ການຕະຫຼາດ, ການບໍລິຫານທຸລະກິດ ເພື່ອນໍາໃຊ້ເຂົ້າໃນການພັດ ທະນາທຸລະກິດ;
2. ສະໜັບສະໜູນທຶນໃຫ້ສະຖາບັນຄົ້ນຄວ້າ ແລະ ສະຖາບັນການສຶກສາຄົ້ນຄວ້າປະດິດນະວັດຕະກໍາດ້ານຕ່າງໆ ເພື່ອໃຫ້ **ຈນກ** ນໍາໃຊ້.

**ມາດຕາ 25 ການສົ່ງເສີມທຸລະກິດແບບສະຕາດອັບ**

1. ຊຸກຍູ້, ສົ່ງເສີມ ໄວໜຸ່ມ, ເພດຍິງ, ຄົນພິການ, ຜູ້ປະກອບກິດຈະການນໍາໃຊ້ສະຕິປັນຍາ ແລະ ຄວາມຮູ້ທາງດ້ານວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກໍາ ແລະ ອື່ນໆ ເພື່ອສ້າງທຸລະກິດແບບສະຕາດອັບດ້ວຍການສ້າງຈິດສໍານຶກ, ສ້າງສູນຝຶກອົບຮົມ, ການໃຫ້ທຶນໄປທັດສະນະສຶກສາ, ໄປຍົກລະ ດັບໄລຍະສັ້ນ, ກາງ ແລະ ຍາວ;
2. ສ້າງເວທີ, ສະຖານທີ່ເຮັດວຽກຮ່ວມ, ສູນກໍ່ສ້າງຜູ້ປະກອບກິດຈະການ, ສ້າງກິດຈະກໍາກະຕຸກຊຸກຍູ້ທຸລະກິດແບບສະຕາດອັບໃນຮູບແບບຕ່າງໆ ແລະ ສ້າງໂອກາດການເຂົ້າເຖິງຕະຫຼາດຂອງຜູ້ປະກອບກິດຈະການ ແບບສະຕາດອັບ;
3. ສ້າງລະບົບນິເວດທຸລະກິດ ເພື່ອພັດທະນາທຸລະກິດ ແບບສະຕາດອັບ ດ້ວຍການອອກນິຕິກໍາ ແລະ ສ້າງເງື່ອນໄຂທີ່ຈໍາເປັນ ເພື່ອຮອງຮັບການສະໜອງທຶນໃຫ້ແກ່ທຸລະກິດແບບສະຕາດອັບ ຈາກແຫຼ່ງທຶນຕ່າງໆເປັນຕົ້ນ ຜູ້ລົງທຶນອິດສະຫຼະ, ການລະດົມທຶນຈາກບຸກຄົນທົ່ວໄປ, ກອງທຶນຮ່ວມລົງທຶນ;
4. ຮັບຮູ້ ແລະ ໃຫ້ການຢັ້ງຢືນທຸລະກິດ ແບບສະຕາດອັບ ເພື່ອໃຫ້ສາມາດເຄື່ອນໄຫວໄດ້ກ່ອນຂຶ້ນທະບຽນວິສາຫະກິດ ແລະ ຂໍອະນຸຍາດດໍາເນີນທຸລະກິດຕາມກໍານົດເວລາທີ່ລັດຖະບານອະນຸຍາດ.

**ມາດຕາ 26 ການເຂົ້າເຖິງການຈັດຊື້-ຈັດຈ້າງ**

1. ສ້າງເງື່ອນໄຂ ແລະ ໃຫ້ໂອກາດ **ຈນກ** ສາມາດເຂົ້າເຖິງການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ແລະ ໂຄງການທີ່ລັດຮ່ວມທຶນ;
2. ສ້າງຄວາມເຂັ້ມແຂງໃຫ້ **ຈນກ** ສາມາດສະໜອງສິນຄ້າ ແລະ ການບໍລິການໃນປະລິມານ ແລະ ຄຸນນະພາບໂດຍສອດຄ່ອງກັບເງື່ອນໄຂຂອງຜູ້ຈັດຊື້-ຈັດຈ້າງ.

## ໝວດທີ IV
## ການວາງແຜນພັດທະນາ ຈນກ ຂອງຂັ້ນແຂວງ ແລະ ຂັ້ນເມືອງ

**ມາດຕາ 27 ການວາງແຜນພັດທະນາ ຈນກ ຂອງຂັ້ນແຂວງ ແລະ ຂັ້ນເມືອງ**

ຄະນະກຳມະການສົ່ງເສີມ **ຈນກ** ຂັ້ນແຂວງ ແລະ ພະແນກອຸດສາຫະກຳ ແລະ ການຄ້າ ສົມທົບກັບຄະນະກຳມະການສົ່ງເສີມ **ຈນກ** ຂັ້ນເມືອງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ເປັນເຈົ້າການໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຂັ້ນແຂວງ-ຂັ້ນເມືອງ ເພື່ອຄົ້ນຄວ້າ ແລະ ວາງແຜນພັດທະນາ **ຈນກ** ເພື່ອນຳສະເຫນີແຂວງພິຈາລະນາ ແລະ ບັນຈຸເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ, ຂອງເມືອງ ປະຈຳປີ ແລະ 5 ປີ.

**ມາດຕາ 28 ການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນພັດທະນາ ຈນກ**

ບັນດາຂະແໜງການພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຂັ້ນແຂວງ ແລະ ຂັ້ນເມືອງມີໜ້າທີ່ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນພັດທະນາ **ຈນກ** ຕາມພາລະບົດບາດຂອງຕົນ.

**ມາດຕາ 29 ການຕິດຕາມປະເມີນຜົນ ແລະ ການລາຍງານ**

ພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງ ເປັນເຈົ້າການສົມທົບກັບຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ໃນການຕິດຕາມປະເມີນຜົນການຈັດຕັ້ງປະຕິ ບັດແຜນພັດທະນາ **ຈນກ** ແຕ່ລະໄລຍະ. ບັນດາຂະແໜງການ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຕ້ອງໃຫ້ການຮ່ວມມືໃນການສະໜອງຂໍ້ມູນ ແລະ ລາຍງານກ່ຽວກັບຜົນຂອງການຈັດຕັ້ງປະຕິບັດແຜນພັດທະນາ **ຈນກ** ຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າຂັ້ນຂອງຕົນໃນແຕ່ລະໄລຍະ.

## ໝວດທີ V

## ການຈັດຕັ້ງສົ່ງເສີມ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

**ມາດຕາ 30 ການຈັດຕັ້ງກ່ຽວກັບວຽກງານສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ**

ການຈັດຕັ້ງກ່ຽວກັບວຽກງານສົ່ງເສີມ **ຈນກ** ມີດັ່ງນີ້:

1. ຄະນະກຳມະການສົ່ງເສີມ **ຈນກ** ຂັ້ນແຂວງ;
2. ຄະນະກຳມະການສົ່ງເສີມ **ຈນກ** ຂັ້ນເມືອງ;
3. ການຈັດຕັ້ງກ່ຽວກັບວຽກງານສົ່ງເສີມ **ຈນກ** ຂອງພາກທຸລະກິດ.

**ມາດຕາ 31 ຄະນະກຳມະການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຂັ້ນແຂວງ**

ຄະນະກຳມະການ ສົ່ງເສີມ **ຈນກ** ຂັ້ນແຂວງ ຂຽນຫຍໍ້ວ່າ: **ຄສວຂ** ຖືກແຕ່ງຕັ້ງໂດຍເຈົ້າແຂວງ ຕາມການສະເໜີຂອງພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ ຊຶ່ງມີໂຄງປະກອບດັ່ງນີ້:

1. ຮອງເຈົ້າແຂວງຜູ້ຊີ້ນຳວຽກງານເສດຖະກິດ ເປັນປະທານ;
2. ຫົວໜ້າ ພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ ເປັນຮອງປະທານ, ຜູ້ປະຈຳການ;
3. ຮອງຫົວໜ້າ ພະແນກການເງິນ ເປັນຄະນະ;
4. ຮອງຫົວໜ້າ ສ່ວຍສາອາກອນແຂວງ ເປັນຄະນະ;
5. ຮອງຫົວໜ້າ ພາສີປະຈຳແຂວງ ເປັນຄະນະ;
6. ຮອງຫົວໜ້າ ສາຂາທະນາຄານ ເປັນຄະນະ;
7. ຮອງຫົວໜ້າ ພະແນກແຜນການ ແລະ ການລົງທຶນ ເປັນຄະນະ;
8. ຮອງຫົວໜ້າ ພະແນກກະສິກຳ ແລະ ປ່າໄມ້ ເປັນຄະນະ;
9. ຮອງຫົວໜ້າ ພະແນກສຶກສາທິການ ແລະ ກິລາ ເປັນຄະນະ;
10. ຮອງຫົວໜ້າ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຄະນະ;
11. ຮອງຫົວໜ້າ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຄະນະ;
12. ຮອງຫົວໜ້າ ພະແນກພະລັງງານ ແລະ ບໍ່ແຮ່ ເປັນຄະນະ;

13. ຮອງຫົວໜ້າ ພະແນກແຮງງານ ແລະ ສະຫວັດດີການສັງຄົມ ເປັນຄະນະ;
14. ຮອງຫົວໜ້າ ພະແນກໂຍທາທິການ ແລະ ຂົນສົ່ງ ເປັນຄະນະ;
15. ຮອງຫົວໜ້າ ພະແນກເຕັກໂນໂລຊີ ແລະ ການສື່ສານ ເປັນຄະນະ;
16. ຮອງຫົວໜ້າ ພະແນກສາທາລະນະສຸກ ແຂວງ ເປັນຄະນະ;
17. ປະທານສະພາການຄ້າ ແລະ ອຸດສາຫະກຳແຂວງ ເປັນຄະນະ;
18. ຮອງຫົວໜ້າ ພະແນກອຸດສາຫະກຳ ແລະ ການຄ້າແຂວງ ເປັນຄະນະ, ຫົວໜ້າກອງເລຂາ.

**ມາດຕາ 32 ຄະນະກຳມະການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຂັ້ນເມືອງ**

ຄະນະກຳມະການ ສົ່ງເສີມ ຈນກ ຂັ້ນແຂວງ ຂຽນຫຍໍ້ວ່າ ຄສວມ ຖືກແຕ່ງຕັ້ງໂດຍເຈົ້າເມືອງ ຕາມການສະເໜີຂອງ ຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ ຊຶ່ງມີໂຄງປະກອບດັ່ງນີ້:

1. ຮອງເຈົ້າເມືອງ ຜູ້ຊີ້ນຳວຽກງານເສດຖະກິດ ເປັນປະທານ;
2. ຫົວໜ້າ ຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ ເປັນຮອງປະທານ, ຜູ້ປະຈຳການ;
3. ຮອງຫົວໜ້າ ຫ້ອງການການເງິນ ເປັນຄະນະ;
4. ຮອງຫົວໜ້າ ຫ້ອງການແຜນການ ແລະ ການລົງທຶນ ເປັນຄະນະ;
5. ຮອງຫົວໜ້າ ຫ້ອງການພະລັງງານ ແລະ ບໍ່ແຮ່ ເປັນຄະນະ;
6. ຮອງຫົວໜ້າ ຫ້ອງການກະສິກຳ ແລະ ປ່າໄມ້ ເປັນຄະນະ;
7. ຮອງຫົວໜ້າ ຫ້ອງການສຶກສາທິການ ແລະ ກິລາ ເປັນຄະນະ;
8. ຮອງຫົວໜ້າ ຫ້ອງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຄະນະ;
9. ຮອງຫົວໜ້າ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຄະນະ;
10. ຮອງຫົວໜ້າ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ເປັນຄະນະ;
11. ຮອງຫົວໜ້າ ຫ້ອງການໂຍທາທິການ ແລະ ຂົນສົ່ງ ເປັນຄະນະ;
12. ຮອງຫົວໜ້າ ຫ້ອງການເຕັກໂນໂລຊີ ແລະ ການສື່ສານ ເປັນຄະນະ;
13. ຮອງຫົວໜ້າ ຫ້ອງການສາທາລະນະສຸກ ເປັນຄະນະ;
14. ຫົວໜ້າ ໜ່ວຍບໍລິການທະນາຄານ ເປັນຄະນະ;
15. ປະທານສະພາການຄ້າ ແລະ ອຸດສາຫະກຳເມືອງ ເປັນຄະນະ;
16. ຮອງຫົວໜ້າ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ເປັນຄະນະ, ຫົວໜ້າກອງເລຂາ

**ມາດຕາ 33 ສິດ ແລະ ໜ້າທີ່ ຂອງຄະນະກຳມະການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຂັ້ນແຂວງ**

ຄສວຂ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາເຜີຍແຜ່ນະໂຍບາຍ, ແຜນພັດທະນາ ແລະ ນິຕິກຳ ກ່ຽວກັບການສົ່ງເສີມ ຈນກ ຢູ່ພາຍໃນແຂວງຂອງຕົນ;
2. ຊີ້ນຳບັນດາພະແນກການ ແລະ ອົງການປົກຄອງຂັ້ນເມືອງ ນຳເອົາວຽກງານສົ່ງເສີມ ຈນກ ເຊື່ອມສານເຂົ້າໃນແຜນພັດທະນາຂະແໜງການຕົນ;
3. ຊີ້ນຳ, ຊຸກຍູ້, ຕິດຕາມ ແລະ ກວດກາ ການເຄື່ອນໄຫວວຽກງານສົ່ງເສີມ ຈນກ ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
4. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານສົ່ງເສີມ ຈນກ ຢູ່ພາຍໃນແຂວງ ຂອງຕົນໃຫ້ຄະນະກຳມະການສົ່ງເສີມ ຈນກ ຂັ້ນສູນກາງ ໃນແຕ່ລະໄລຍະ;
5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 34 ສິດ ແລະ ໜ້າທີ່ ຂອງຄະນະກຳມະການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ**

ຄສວມ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາເຜີຍແຜ່ນະໂຍບາຍ, ແຜນພັດທະນາ ແລະ ນິຕິກຳ ກ່ຽວກັບການສົ່ງເສີມ **ຈນກ** ຢູ່ພາຍໃນເມືອງຂອງຕົນ;
2. ຊີ້ນຳບັນດາຫ້ອງການນຳເອົາວຽກງານສົ່ງເສີມ **ຈນກ** ເຊື່ອມສານເຂົ້າໃນແຜນພັດທະນາຂະແໜງການຕົນ;
3. ຊີ້ນຳ, ຊຸກຍູ້, ຕິດຕາມ ແລະ ກວດກາ ການເຄື່ອນໄຫວວຽກງານສົ່ງເສີມ **ຈນກ** ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
4. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານສົ່ງເສີມ **ຈນກ** ຢູ່ພາຍໃນເມືອງ ຂອງຕົນໃຫ້ຄະນະກຳມະການສົ່ງເສີມ **ຈນກ** ຂັ້ນແຂວງ ໃນແຕ່ລະໄລຍະ;
5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 35 ການຈັດຕັ້ງກ່ຽວກັບວຽກງານສົ່ງເສີມ ຈຸນລະວິສາຫະກິດ,ວິສາຫະກິດຂະໜາດນ້ອຍ ແລະ ກາງຂອງພາກທຸລະກິດ**

ການຈັດຕັ້ງກ່ຽວກັບວຽກງານສົ່ງເສີມ **ຈນກ** ຂອງພາກທຸລະກິດ ປະກອບດ້ວຍການຈັດຕັ້ງດັ່ງນີ້:

1. ສະພາການຄ້າ ແລະ ອຸດສາຫະກຳແຂວງ;
2. ສະມາຄົມສົ່ງເສີມ **ຈນກ**;
3. ການຈັດຕັ້ງພາກທຸລະກິດອື່ນ.

**ມາດຕາ 36 ສິດ ແລະ ໜ້າທີ່ ຂອງການຈັດຕັ້ງສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຂອງພາກທຸລະກິດ**

1. ເປັນຂົວຕໍ່ໃຫ້ແກ່ພາກລັດກັບພາກທຸລະກິດໃນການພົວພັນປະສານງານ, ການສະໜອງຂໍ້ມູນ, ການເຜີຍແຜ່ ນະໂຍບາຍ ແລະ ນິຕິກຳ ກ່ຽວກັບການສົ່ງເສີມ **ຈນກ** ໃຫ້ບັນດາຫົວໜ່ວຍທຸລະກິດ ຢ່າງກວ້າງຂວາງໃນຮູບແບບຕ່າງໆ;
2. ສ້າງຕັ້ງສູນ ຫຼື ໜ່ວຍງານເພື່ອສະໜອງການບໍລິການວິຊາການເພື່ອພັດທະນາທຸລະກິດ, ຂໍ້ມູນຂ່າວສານໃຫ້ **ຈນກ** ຢ່າງທັນການ ແລະ ທົ່ວເຖິງ;
3. ຄົ້ນຄວ້າ ແລະ ມີຄຳເຫັນ ຕໍ່ນະໂຍບາຍ, ແຜນຍຸດທະສາດ ແລະ ນິຕິກຳກ່ຽວກັບການສົ່ງເສີມ **ຈນກ**;
4. ຈັດ ແລະ ເຂົ້າຮ່ວມງານວາງສະແດງສິນຄ້າ ຕາມຂອບເຂດສິດຂອງຕົນ;
5. ສະເໜີຍ້ອງຍໍ **ຈນກ** ທີ່ມີຜົນງານດີເດັ່ນ ໃນການເຄື່ອນໄຫວທຸລະກິດ, ປະກອບສ່ວນພັດທະນາ ແລະ ຊ່ວຍເຫຼືອສັງຄົມ;
6. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານສົ່ງເສີມ **ຈນກ** ທີ່ຕົນຮັບຜິດຊອບໃຫ້ ພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ປະຈຳ 3 ເດືອນ 6 ເດືອນ ແລະ ປະຈຳປີຢ່າງເປັນປົກກະຕິ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມທີ່ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຂໍ້ຕົກລົງສະບັບນີ້.

## ໝວດທີ VI
## ອົງການຄຸ້ມຄອງ ແລະ ອົງການກວດກາວຽກງານ ສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

**ມາດຕາ 37 ອົງການຄຸ້ມຄອງ ການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດ ຂະໜາດນ້ອຍ ແລະ ກາງ**

ອົງການຄຸ້ມຄອງກ່ຽວກັບການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ປະກອບມີ:

1. ພະແນກອຸດສາຫະກຳ ແລະ ການຄ້າແຂວງ;
2. ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ;
3. ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 38 ສິດ ແລະ ຫນ້າທີ່ຂອງພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງ**

1. ຈັດຕັ້ງປະຕິບັດນະໂຍບາຍ, ແຜນພັດທະນາ ແລະ ນິຕິກຳກ່ຽວກັບການສົ່ງເສີມ **ຈນກ** ພາຍໃນແຂວງຂອງຕົນ;
2. ໂຄສະນາເຜີຍແຜ່ ແລະ ຊຸກຍູ້ການຈັດຕັ້ງປະຕິບັດນະໂຍບາຍ, ແຜນພັດທະນາ ແລະ ນິຕິກຳກ່ຽວກັບການສົ່ງເສີມ **ຈນກ** ໃຫ້ພາກລັດ ແລະ ພາກທຸລະກິດຮັບຮູ້ຢ່າງກວ້າງຂວາງພາຍໃນແຂວງ;
3. ຊີ້ນຳ ແລະ ຕິດຕາມການເຄື່ອນໄຫວຂອງ ຫ້ອງການອຸດສະຫະກຳ ແລະ ການຄ້າເມືອງ ກ່ຽວກັບວຽກງານສົ່ງເສີມ **ຈນກ**;
4. ສະຫນອງຂໍ້ມູນຂ່າວສານກ່ຽວກັບວຽກງານສົ່ງເສີມ **ຈນກ** ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ, ຕິດຕາມແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາ **ຈນກ** ໃນແຕ່ລະໄລຍະຢູ່ທ້ອງຖິ່ນຂອງຕົນ;
5. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງທັງພາກລັດ ແລະ ພາກທຸລະກິດໃນການຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ ແລະ ແຜນພັດທະນາ **ຈນກ** ຕາມຄວາມຮັບຜິດຊອບຂອງຕົນ;
6. ພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບວຽກງານສົ່ງເສີມ **ຈນກ** ຕາມການມອບໝາຍ;
7. ຮັບຄຳສະເຫນີ ແລະ ການລາຍງານຂອງພາກທຸລະກິດ ແລະ ພາກສ່ວນທີ່ກ່ຽວຂ້ອງກ່ຽວກັບວຽກງານສົ່ງເສີມ **ຈນກ** ເພື່ອສັງລວມ ແລະ ຄົ້ນຄວ້າພິຈາລະນາ ລາຍງານຂັ້ນເທິງ;
8. ສະຫຼຸບ ແລະ ລາຍງານຜົນຂອງການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານສົ່ງເສີມ **ຈນກ** ໃຫ້ອົງການປົກຄອງຂັ້ນແຂວງ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ຢ່າງເປັນປົກກະຕິ;
9. ນຳໃຊ້ສິດ ແລະ ປະຕິບັດຫນ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 39 ສິດ ແລະ ຫນ້າທີ່ຂອງຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ**

1. ຈັດຕັ້ງປະຕິບັດແຜນການ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳກ່ຽວກັບວຽກງານສົ່ງເສີມ **ຈນກ** ທີ່ຂັ້ນເທິງໄດ້ວາງອອກ;
2. ເຜີຍແຜ່ນະໂຍບາຍ, ກົດຫມາຍ ແລະ ລະບຽບການກ່ຽວກັບການສົ່ງເສີມ **ຈນກ** ພາຍໃນເມືອງໃຫ້ຮັບຮູ້ຢ່າງກວ້າງຂວາງ ແລະ ທົ່ວເຖິງ;
3. ຊີ້ນຳ, ຊຸກຍູ້ ແລະ ຕິດຕາມການຈັດຕັ້ງປະຕິບັດວຽກງານສົ່ງເສີມ **ຈນກ** ພາຍໃນເມືອງຂອງຕົນ;
4. ຮັບຄຳສະເໜີ ແລະ ການລາຍງານຂອງພາກທຸລະກິດ ແລະ ພາກສ່ວນທີ່ກ່ຽວຂ້ອງກ່ຽວກັບວຽກງານສົ່ງເສີມ ຈນກ ພາຍໃນເມືອງຂອງຕົນ ເພື່ອສັງລວມລາຍງານຂັ້ນເທິງພິຈາລະນາ;
5. ສະຫຼຸບ ແລະ ລາຍງານຜົນການຈັດຕັ້ງປະຕິບັດວຽກງານສົ່ງເສີມ **ຈນກ** ຢູ່ພາຍໃນເມືອງຂອງຕົນໃຫ້ສາຍຕັ້ງສາຍຂວາງຂອງຕົນຢ່າງເປັນປົກກະຕິ;
6. ນຳໃຊ້ສິດ ແລະ ປະຕິບັດຫນ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 40 ສິດ ແລະ ຫນ້າທີ່ຂອງຂະແຫນງການ, ອົງການປົກຄອງທ້ອງຖິ່ນແລະ ພາກສ່ວນທີ່ກ່ຽວຂ້ອງ**

ຂະແໜງການທີ່ກ່ຽວຂ້ອງ ຂັ້ນແຂວງ ແລະ ຂັ້ນເມືອງ ມີສິດ ແລະ ໜ້າທີ່ ໃນການສົ່ງເສີມ, ຊຸກຍູ້, ຕິດຕາມ, ກວດກາ, ໃຫ້ການຮ່ວມມື ແລະ ປະສານສົມທົບກັບອົງການຄຸ້ມຄອງວຽກງານສົ່ງເສີມ ຈນກ ແລະ ການຈັດຕັ້ງສົ່ງເສີມ **ຈນກ** ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 41 ອົງການກວດກາວຽກງານສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ**

ອົງການກວດກາວຽກງານສົ່ງເສີມ **ຈນກ** ປະກອບດ້ວຍ:

1. ອົງການກວດກາພາຍໃນເຊິ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານສົ່ງເສີມ **ຈນກ** ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 37 ຂອງຂໍ້ຕົກລົງສະບັບນີ້;
2. ອົງການກວດກາພາຍນອກຊຶ່ງແມ່ນສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດແຂວງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ສື່ມວນຊົນ.

**ມາດຕາ 42 ເນື້ອໃນການກວດກາ**

ການກວດກາວຽກງານສົ່ງເສີມ **ຈນກ** ມີດັ່ງນີ້:

1. ການປະຕິບັດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານສົ່ງເສີມ **ຈນກ**;
2. ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການຄຸ້ມຄອງ ແລະ ກວດກາວຽກງານສົ່ງເສີມ **ຈນກ**;
3. ການຄຸ້ມຄອງ, ຕິດຕາມ, ກວດກາ ແລະ ນຳໃຊ້ກອງທຶນສົ່ງເສີມ **ຈນກ**;
4. ການນຳໃຊ້ສິດ, ການປະຕິບັດໜ້າທີ່ຂອງພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງກັບວຽກງານສົ່ງເສີມ **ຈນກ.**

**ມາດຕາ 43 ຮູບການກວດກາ**

ການກວດກາວຽກງານສົ່ງເສີມ ຈນກ ມີ 3 ຮູບການດັ່ງນີ້:

1. ການກວດກາປົກກະຕິ ເຊິ່ງແມ່ນ ການກວດກາ ຕາມແຜນການຢ່າງເປັນປະຈຳ ແລະ ມີການກຳນົດເວລາອັນ ແນ່ນອນ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການເມື່ອເຫັນວ່າມີຄວາມຈຳເປັນເຊິ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;
3. ການກວດກາກະທັນຫັນ ເຊິ່ງແມ່ນການກວດກາເມື່ອເຫັນວ່າ ມີຄວາມຈຳເປັນ ແຕ່ການລົງກວດການັ້ນດຳເນີນຢ່າງຮີບດ່ວນໂດຍບໍ່ມີການແຈ້ງໃຫ້ເປົ້າໝາຍທີ່ຈະຖືກກວດກາຮູ້ກ່ອນລ່ວງໜ້າ. ໃນການດຳເນີນການກວດກາ ວຽກງານສົ່ງເສີມ **ຈນກ** ໃຫ້ປະຕິບັດ ຖືກຕ້ອງຕາມກົດໝາຍ ຢ່າງເຂັ້ມງວດ.

## ໝວດທີ VII
## ຂໍ້ຫ້າມ

**ມາດຕາ 44 ຂໍ້ຫ້າມສຳລັບການຈັດຕັ້ງ ແລະ ພະນັກງານສົ່ງເສີມ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ**

1. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບທາງດ້ານທຸລະກິດຂອງ **ຈນກ** ເວັ້ນເສຍແຕ່ໄດ້ຮັບອະນຸຍາດຈາກ **ຈນກ** ນັ້ນ;
2. ປອມແປງ, ບິດເບືອນ ຂໍ້ມູນສະເພາະຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ເພື່ອຜົນປະໂຫຍດສ່ວນຕົວ ຫຼື ສ້າງຄວາມເສຍຫາຍ ໃຫ້ແກ່ບຸນຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງນັ້ນ ໂດຍເຈດຕະນາ;
3. ທວງ, ຖາມເອົາ ຫຼື ຮັບສິນບົນ ຈາກຜູ້ປະກອບກິດຈະການ;
4. ລະເມີດຈັນຍາບັນຂອງພະນັກງານ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ

**ມາດຕາ 45 ຂໍ້ຫ້າມສຳລັບຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ຜູ້ປະກອບກິດຈະການ**

1. ລາຍງານຂໍ້ມູນເທັດ ກ່ຽວກັບສະພາບການເຄື່ອນໄຫວທຸລະກິດຂອງຕົນ;
2. ປອມແປງ, ບິດເບືອນຂໍ້ມູນສະເພາະຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນເພື່ອຜົນປະໂຫຍດຂອງທຸລະກິດຕົນ ຫຼື ສ້າງຄວາມເສຍຫາຍໃຫ້ແກ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງນັ້ນໂດຍເຈດຕະນາ;
3. ສະເໜີໃຫ້ ຫຼື ໃຫ້ສິນບົນແກ່ການຈັດຕັ້ງ ແລະ ພະນັກງານສົ່ງເສີມ **ຈນກ**;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ຂໍ້ຕົກລົງສະບັບນີ້.

## ໝວດທີ VIII
## ນະໂຍບາຍຕໍ່ ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 46 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ ແລະ ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນໃນການປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດວຽກງານສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຢ່າງມີປະສິດທິຜົນ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ

**ມາດຕາ 47 ມາດຕະການ ຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ລະເມີດ ຂໍ້ຕົກລົງສະບັບນີ້ ເປັນຕົ້ນບັນດາຂໍ້ຫ້າມຈະຖືກກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີເບົາ ຫຼື ໜັກ.

## ໝວດທີ IX
## ບົດບັນຍັດສຸດທ້າຍ

**ມາດຕາ 48 ການຈັດຕັ້ງປະຕິບັດ**

ບັນດາພະແນກການ, ອົງການຈັດຕັ້ງຕ່າງໆທັງພາຍໃນ ແລະ ຕ່າງປະເທດ, ເມືອງ, ບ້ານ, ນິຕິບຸກຄົນທີ່ເຄື່ອນໄຫວຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຢູ່ ແຂວງຫຼວງນໍ້າທາ ຈົ່ງພ້ອມກັນຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 49 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ່ ລົງລາຍເຊັນ ແລະ ພາຍຫຼັງ ສິບຫ້າວັນ ນັບແຕ່ວັນພິມລົງຈົດໝາຍເຫດທາງລັດຖະການເປັນຕົ້ນໄປ.

ລະບຽບການໃດທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແລ້ວແຕ່ຖືກຍົກເລີກ.

[ເຈົ້າແຂວງ]

ວຽງສະຫວັດ ສີພັນດອນ